ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ...10........./ຈຂ.ອປ
ອັດຕະປື, ວັນທີ29ພຶດສະພາ2025

# ຄຳສັ່ງ
## ວ່າດ້ວຍການຄຸ້ມຄອງ ແລະ ເກັບກູ້ນຳໃຊ້ເຄື່ອງປ່າຂອງດົງ (ປະເພດໝາກຈອງບານ)

**ເຖິງ: ພະແນກການອ້ອມຂ້າງແຂວງ, ກອງບັນຊາການ ປກຊ-ປກສ ແລະ ເຈົ້າເມືອງ 05 ຕົວເມືອງ.**

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ 4, ມາດຕາ 20, ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019.
- ອີງຕາມ ໜັງສືສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ສະບັບເລກທີ 0826/ກປຂ.ອປ, ລົງວັນທີ 29 ເມສາ 2025.

ໝາກຈອງບານແມ່ນເຄື່ອງປ່າຂອງດົງຕາມລະດູການ ທີ່ກຳນົດເຂົ້າໃນບັນຊີເຄື່ອງປ່າຂອງດົງປະເພດ II ຕາມຂໍ້ຕົກລົງ ສະບັບເລກທີ 0279/ກປ, ລົງວັນທີ 19 ກຸມພາ 2020, ເຊິ່ງເປັນເຄື່ອງປ່າຂອງດົງທີ່ມີລາຄາແພງພໍສົມຄວນ ແລະ ມີຄວາມຕ້ອງການຫຼາຍຈາກຕະຫຼາດທັງພາຍໃນ ແລະ ຕ່າງປະເທດ. ການໃຫ້ຜົນຜະລິດຂອງໝາກແມ່ນຈະໃຫ້ຜົນຜະລິດຊ່ວງເດືອນ ເມສາ ຫາ ເດືອນ ພຶດສະພາຂອງທຸກໆປີ ແລະ ຈຸດພິເສດຂອງໝາກຈອງບານ ຖ້າຫາກວ່າເກັບກູ້ບໍ່ທັນຕາມລະດູການ ແລະ ກ້າວເຂົ້າສູ່ລະດູຝົນໝາກຈອງບານທີ່ຫຼົ່ນລົງດິນ ເມື່ອຝົນຕົກລົງມາໃສ່ກໍ່ຈະເຮັດໃຫ້ໝາກຈອງບານເປື່ອຍ ແລະ ບໍ່ສາມາດນຳມາໃຊ້ເປັນປະໂຫຍດໄດ້. ສະນັ້ນ, ເພື່ອຮັບປະກັນການຄຸ້ມຄອງເກັບກູ້ໃຫ້ທັນຕາມລະດູການ, ມີຄວາມຍືນຍົງ ແລະ ຫຼີກລ້ຽງການເກັບກູ້ແບບດັບສູນ.

## ເຈົ້າແຂວງ ອອກຄຳສັ່ງ:

1. ຫ້າມບຸກຄົນ, ນິຕິບຸກຄົນ, ພະນັກງານ, ທະຫານ, ຕຳຫຼວດ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາເຄື່ອນໄຫວ ເກັບກູ້ທ້ອນໂຮມ ແລະ ຊື້-ຂາຍເຄື່ອງປ່າຂອງດົງປະເພດໝາກຈອງບານ ເພື່ອທຸລະກິດໂດຍບໍ່ໄດ້ຮັບການອະນຸຍາດ;
2. ບັນດາບໍລິສັດທີ່ໄດ້ຮັບອະນຸຍາດເກັບກູ້ທ້ອນໂຮມ ແລະ ຊື້-ຂາຍເຄື່ອງປ່າຂອງດົງປະເພດໝາກຈອງບານ, ຕ້ອງມີໃບທະບຽນວິສາຫະກິດຈາກພະແນກອຸດສາຫະກຳ ແລະ ການຄ້າແຂວງ, ມີໃບອະນຸຍາດຂຸດຄົ້ນເຄື່ອງປ່າຂອງດົງຈາກ ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຕ້ອງໄດ້ປະຕິບັດຕາມກົດລະບຽບວ່າດ້ວຍການຄຸ້ມຄອງ, ເກັບກູ້-ຊື້ຂາຍໝາກຈອງບານ ຢ່າງເຂັ້ມງວດຄື:
   - ຫ້າມເກັບກູ້ໝາກຈອງບານແບບດັບສູນ, ບໍ່ຖືກວິທີເຊັ່ນວ່າ: ການຕັດຕົ້ນ, ການຂຶ້ນໄປສັ່ນ, ຮ່ານງ່າ ແລະ ໃຊ້ລວດຮັດໃຫ້ຕົ້ນໝາກຈອງຕາຍ, ຖ້າຫາກວ່າພົບເຫັນແມ່ນຈະໄດ້ດຳເນີນຄະດີໄປຕາມລະບຽບກົດໝາຍ.
   - ບໍລິສັດທີ່ໄດ້ຮັບອະນຸຍາດຕ້ອງເກັບກູ້, ເກັບຊື້ໝາກຈອງບານພາຍໃນຂອບເຂດບ້ານທີ່ໄດ້ຮັບອະນຸຍາດ ແລະ ທ້ອນໂຮມໄວ້ໃນຈຸດທີ່ພາກລັດກຳນົດໃຫ້;
   - ຫ້າມລັກລອບການຊື້-ຂາຍໝາກຈອງບານແບບບໍ່ໄດ້ຮັບການອະນຸຍາດ ຫຼື ບໍ່ມີການເສຍພັນທະອາກອນຕ່າງໆ;

- ຫ້າມຊື້-ຂາຍໝາກຈອງບານດິບ ແລະ ໝາກຈອງບານທີ່ບໍ່ຫຼົ່ນຕາມທຳມະຊາດ (ໝາກຈອງບານສົ້ນເອີາ, ໝາກຈອງບານໜຶ້ງ) ຖ້າພົບເຫັນຈະໄດ້ດຳເນີນຄະນະດີຕາມກົດໝາຍຢ່າງເຄັ່ງຄັດ, ກັກຕົວ, ຍຶດຊັບໂດຍບໍ່ມີເງື່ອນໄຂ;
- ຫ້າມລັກລອບເຄື່ອນຍ້າຍໝາກຈອງບານຈາກບ້ານ, ເມືອງ ແລະ ແຂວງໂດຍບໍ່ໄດ້ຮັບອະນຸຍາດຢ່າງເດັດຂາດ;
- ຫ້າມບໍ່ໃຫ້ບຸກຄົນ ຫຼື ກຸ່ມຄົນ ເຂົ້າມາດຳເນີນການສຳຫຼວດ ແລະ ຈັບຈອງເຂດປ່າໝາກຈອງບານ ຖ້າບໍ່ໄດ້ຮັບອະນຸຍາດຈາກບ້ານ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

3. ໃຫ້ອົງການປົກຄອງເມືອງສົມທົບກັບພາກສ່ວນທີ່ກ່ຽວຂ້ອງຮ່ວມກັບອຳນາດການປົກຄອງບ້ານດຳເນີນການຄຸ້ມຄອງໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຖ້າພົບເຫັນຜູ້ກະທຳຜິດໃຫ້ດຳເນີນຄະດີໄປຕາມລະບຽບກົດໝາຍ;
4. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນໃຈກາງສົມທົບທົບກັບພາກສ່ວນທີ່ກ່ຽວຂ້ອງຄຸ້ມຄອງການເກັບກູ້ຫ້ອນໂຮມ, ການຊື້-ຂາຍ, ມອບພັນທະອາກອນ, ເຄື່ອນຍ້າຍພາຍໃນ ແລະ ສົ່ງອອກ ເຄື່ອງປ່າຂອງດົງປະເພດໝາກຈອງບານ ໃຫ້ຖືກຕ້ອງຕາມລະບຽບການຢ່າງເຂັ້ມງວດ;
5. ໃຫ້ບໍລິສັດທີ່ໄດ້ຮັບອະນຸຍາດເຊັນສັນຍາຮ່ວມກັບແຂວງກ່ຽວກັບການຄຸ້ມຄອງເພື່ອອະນຸລັກ, ຟື້ນຟູ ແລະ ນຳໃຊ້ເຄື່ອງປ່າຂອງດົງ ປະເພດໝາກຈອງບານໃນແຕ່ລະເຂດບ້ານ ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງແຂວງ ແລະ ເມືອງ ເພື່ອສືບຕໍ່ຈັດຕັ້ງປະຕິບັດໂຄງການດັ່ງກ່າວໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍ;
6. ບັນດາບໍລິສັດທີ່ໄດ້ເຊັນສັນຍາກັບແຂວງ ບໍ່ໃຫ້ມີການແກ້ງແຍ້ງແຂ່ງຂັນລາຄາໃນການຈັດຕັ້ງປະຕິບັດໃຫ້ມີຄວາມເອກະພາບກັນ;
7. ທຸກພາກສ່ວນຂະແໜງການຂັ້ນແຂວງ, ອົງການປົກຄອງເມືອງ, ອຳນາດການປົກຄອງບ້ານ, ປະຊາຊົນບັນດາເຜົ່າ, ຊາວຕ່າງດ້າວທີ່ອາໄສຢູ່ແຂວງອັດຕະປື ແລະ ນັກທຸລະກິດ ຈົ່ງຮັບຮູ້ ແລະ ພ້ອມກັນເຂົ້າຮ່ວມໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ;
8. ຄຳສັ່ງສະບັບນີ້ ປ່ຽນແທນຄຳສັ່ງ ສະບັບເລກທີ 05/ຈຂອປ, ລົງວັນທີ 11 ເມສາ 2024 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ປ່ອນນຳສົ່ງ:

- ຫ້ອງວ່າການແຂວງ 01 ສະບັບ;
- ບັນດາພະແນກການອ້ອມຂ້ອງແຂວງ 01 ສະບັບ;
- ກອງບັນຊາການ ປກຊ-ປກສ 01 ສະບັບ;
- ຫ້ອງວ່າການເມືອງ 5 ຕົວເມືອງ 01 ສະບັບ;
- ເກັບຮັກສາໄວ້ 01 ສະບັບ.

ແຂວງອັດຕະປື
ເຈົ້າແຂວງ

ພັທ ວັນທອງ ກອງມະນີ